ຜ-ຟຟລ ຮ່ວມໃຈຊ່ວຍເຫຼືອຜູ້ປະສົບໄພນ້ຳ ຖ້ວມ ເມືອງ ຫາດຊາຍຟອງ ນະຄອນຫຼວງວຽງຈັນ









ໃນວັນທີ 04 ສິງຫາ 2025

ໃນວັນທີ 4 ສິງຫາ 2025, ຕາງໜ້າຈາກ 3 ອົງການຈັດຕັ້ງມະຫາຊົນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ພ້ອມດ້ວຍທີມງານກູ້ໄພມູນນິທິຈີນ 1628 ໄດ້ນຳເອົາເຄື່ອງອຸປະໂພກ-ບໍລິໂພກໄປມອບໃຫ້ປະຊາຊົນທີ່ປະສົບໄພນ້ຳຖ້ວມ ທີ່ບ້ານດອນ, ບ້ານຫາດດອກແກ້ວ ແລະ ບ້ານຫາດກັນຊາ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ.

ສິ່ງຂອງທີ່ນຳໄປຊ່ວຍເຫຼືອໃນຄັ້ງນີ້ ປະກອບດ້ວຍ ອາຫານແຫ້ງ, ປາກະປ໋ອງ, ເຂົ້າສານ, ນ້ຳດື່ມ ແລະ ເຄື່ອງນຸ່ງຫົ່ມຈຳນວນໜຶ່ງ ເຊິ່ງໄດ້ບັນຈຸໃສ່ຖົງຢ່າງຮຽບຮ້ອຍ ເພື່ອນຳໄປແຈກຢາຍໃຫ້ແກ່ຊາວບ້ານຫຼາຍກວ່າ 100 ຄອບຄົວທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດໃນອາທິດທີ່ຜ່ານມາ.

ວັດຖຸປັດໄຈດັ່ງກ່າວມີມູນຄ່າປະມານ 10 ລ້ານກີບ, ເຊິ່ງໄດ້ມາຈາກການລະດົມສົມທົບຈາກຄະນະພັກ-ຄະນະນຳ, 3 ອົງການຈັດຕັ້ງມະຫາຊົນ ແລະ ບັນດາພະນັກງານທັງພາຍໃນສຳນັກງານໃຫຍ່, ບໍລິສັດລູກ ແລະ ບໍລິສັດໃນເຄືອຂອງ ຜ-ຟຟລ.

ເຂົ້າຮ່ວມພິທີມອບ-ຮັບໃນຄັ້ງນີ້ ໂດຍແມ່ນຕາງໜ້າໂດຍ 3 ອົງການຈັດຕັ້ງມະຫາຊົນ ແລະ ທີມງານຊາວໜຸ່ມຕະລຸມບອນຂອງ ຜ-ຟຟລ. ຜູ້ຮັບມອບແມ່ນ ຫົວໜ້າຫ້ອງວ່າການປົກຄອງເມືອງຫາດຊາຍຟອງ, ອຳນາດການປົກຄອງທັງ 3 ບ້ານ ແລະ ຕົວແທນປະຊາຊົນຜູ້ຖືກຜົນກະທົບ.

🤝ຜ-ຟຟລ ຂໍເປັນສ່ວນໜຶ່ງໃນການສ້າງສັງຄົມໃຫ້ດີຂຶ້ນ ແລະ ພ້ອມທີ່ຈະເປັນກຳລັງໃຈໃຫ້ຜູ້ປະສົບໄພທຸກຄົນ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ທາງເລືອກທີ່ຍືນຍົງສຳລັບທ່ານ, ພະລັງງານທີ່ຍືນຍົງສຳລັບຊາດ